# ບົດບັນທຶກກອງປະຊຸມແຜນການຮ່ວມມື ລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສຳນັກງານພານິດຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 6 ວັນທີ 25-26 ມີນາ 2014 ທີ່ແຂວງຈຳປາສັກ, ສປປ ລາວ

1. ກອງປະຊຸມ "ແຜນການຮ່ວມມື ລະຫວ່າງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສານັກງານພານິດຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 6" ໄດ້ຈັດຂຶ້ນໃນລະຫວ່າງວັນທີ 25-26 ມີນາ 2014 ທີ່ແຂວງຈຳປາສັກ, ສປປ ລາວ.

2. ທ່ານ ພັນ ວິໄລສິນ, ຮອງຫົວໜ້າກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ທ່ານ ວຸດທິໄຊ ດວງຣັດ, ຮອງຫົວໜ້າຫ້ອງການ, ກະຊວງພານິດ ແຫ່ງ ຣາຊະອານາຈັກໄທໄດ້ເປັນປະທານຮ່ວມໃນກອງປະຊຸມແຜນການຮ່ວມມື ລະຫວ່າງພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ສຳນັກງານພານິດຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 6.

3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ຫົວໜ້າຂະແໜງຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ 8 ແຂວງທີ່ມີຊາຍແດນຕິດກັບໄທ ປະກອບດ້ວຍ ແຂວງບໍ່ແກ້ວ, ໄຊຍະບູລີ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ , ສະຫວັນນະເຂດ, ສາລະວັນ, ແລະ ຈຳປາສັກ ແລະ ພານິດຈັງຫວັດ ແລະ ຜູ້ແທນສຳນັກງານພານິດຈັງຫວັດ 11 ຈັງຫວັດທີ່ມີຊາຍແດນຕິດກັບ ສປປ ລາວ ປະກອບດ້ວຍຈັງຫວັດຊຽງຣາຍ, ພະເຢົາ, ນ່ານ, ອຸດຕະຣະດິດ, ພິດສະນຸໂລກ, ເລີຍ, ໜອງຄາຍ, ນະຄອນພະນົມ, ມຸກດາຫານ, ອຳນາດຈະເລີນ ແລະ ອຸບົນຣາຊະທານີ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງສອງຝ່າຍໄດ້ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້. ລາຍຊື່ຄະນະຜູ້ແທນຂອງທັງສອງຝ່າຍລະບຸໄວ້ໃນ **ເອກະສານຊ້ອນທ້າຍ** 1 ແລະ 2 ຕາມ ລຳດັບ ແລະ ມີວາລະກອງປະຊຸມຄັດຕິດໃນ**ເອກະສານຊ້ອນທ້າຍ** 3.

4. ກອງປະຊຸມໄດ້ແບ່ງເປັນກຸ່ມປະຊຸມປຶກສາຫາລືຍ່ອຍຕາມລຳແມ່ນ້ຳຂອງຕອນເທິງ ແລະ ຕອນລຸ່ມ ລະຫວ່າງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ 8 ແຂວງ ແລະ ສານັກງານພານິດຈັງຫວັດ 11 ຈັງຫວັດ ທີ່ມີຊາຍແດນຕິດກັນໄດ້ມີການປຶກສາຫາລືເພື່ອແລກປ່ຽນຂໍ້ຄິດເຫັນ ແລະ ນຳສະເໜີຜົນການປຶກສາຫາລືຕໍ່ກອງປະຊຸມຄົບຄະນະ.

**ການທົບທວນການຈັດຕັ້ງປະຕິບັດບົດບັນທຶກຜົນກອງປະຊຸມແຜນການຮ່ວມມືລະຫວ່າງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສຳນັກງານພານິດຈັງຫວັດຊາຍແດນລາວ-ໄທ ຄັ້ງທີ 5 ໃນລະຫວ່າງວັນທີ 26-27 ກັນຍາ 2012 ທີ່ ອຳເພີຊະອຳ, ຈັງຫວັດເພັດຊະບູລີ, ຣາຊະອານາຈັກໄທສະຫຼຸບໄດ້ດັ່ງນີ້:**

5. ໂຄງການກະສິກຳແບບມີສັນຍາ (Contract Farming)

- ສອງຝ່າຍສະແດງຄວາມຍິນດີຕໍ່ກັບຜົນສຳເລັດຂອງການລົງນາມລະຫວ່າງສອງລັດຖະບານໃນບົດບັນທຶກວ່າດ້ວຍການສົ່ງເສີມໂຄງການລົງທຶນກະສິກຳແບບມີສັນຍາ ພາຍໃຕ້ກອບຍຸດທະສາດການຮ່ວມມືທາງດ້ານເສດຖະກິດ ເອຣາວະດີ-ເຈົ້າພະຍາ-ແມ່ນ້ຳຂອງ (ACMECS) ໃນວັນທີ 13 ມີນາ 2013 ທີ່ນະຄອນຫຼວງວຽງຈັນ.
- ທັງສອງຝ່າຍສືບຕໍ່ຕິດຕາມຜົນຂອງການສ້າງຕັ້ງຄະນະປະຕິບັດງານຮ່ວມສອງຝ່າຍ (Joint Bilateral Working Committee) ພາຍໃນຂອງຕົນແລ້ວແຈ້ງໃຫ້ອີກຝ່າຍໜຶ່ງຊາບຢ່າງເປັນທາງການຕໍ່ໄປ ເພື່ອໃຫ້ມີຄວາມກະຈ່າງແຈ້ງໃນຂອດການປະສານງານ.

- ທັງສອງຝ່າຍເຫັນວ່າການລົງນາມບົດບັນທຶກດ້ວຍການສົ່ງເສີມໂຄງການລົງທຶນກະສິກຳແບບມີສັນຍາ ພາຍໃຕ້ກອບ ACMECS ການເຮັດສັນຍາຂອງພາກທຸລະກິດທີ່ຕິດພັນກັບ Contract Farming ມີບົດບາດຟົດຟື້ນຂຶ້ນກວ່າເກົ່າ.

6. ສັນຍາຊື້-ຂາຍສິນຄ້າກະສິກຳ

ສອງຝ່າຍຈະຮ່ວມມືກັນໃນດ້ານການພັດທະນາເພື່ອເປັນສິນຄ້າກະສິກຳມີມາດຕະຖານ ແລະ ລາຄາເປັນໄປຕາມທີ່ຕົກລົງກັນໄວ້ ໂດຍສະເພາະສິນຄ້າທີ່ ສປປ ລາວ ມີຄວາມສາມາດໃນການຜະລິດ ແລະ ຝ່າຍໄທມີຕະຫຼາດຮອງຮັບ ເຊັ່ນ: ກະລໍ່າປີ, ມັນຕົ້ນຕາກແຫ້ງ, ໝາກເລັ່ນ, ສາລີ ແລະ ສິນຄ້າກະສິກາປະເພດອື່ນໆ ເພື່ອໃຫ້ການຊື້ຂາຍສິນຄ້າກະສິກຳມີຄວາມສະດວກທັງສອງຝ່າຍ.

7. ການອຳນວຍຄວາມສະດວກທາງດ້ານການຄ້າ

(1) ໂຄງການທົດລອງພັດທະນາລະບົບ ICT

ຝ່າຍໄທແຈ້ງຄວາມຄືບໜ້າໂຄງການທົດລອງພັດທະນາລະບົບ ICT ເພື່ອພັດທະນາລະບົບມາດຕະຖານຂໍ້ມູນດ້ານການຄ້າ ອຸດສາຫະກຳ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງໃນ 5 ແຂວງຂອງ ສປປ ລາວ ຊຶ່ງປະຈຸບັນໄດ້ມີການສຳເລັດການຂຽນ TOR ແລ້ວ ແລະ ຢູ່ລະຫວ່າງດຳເນີນຂະບວນການຈັດຊື້ຈັດຈ້າງ ແລະ ເມື່ອສຳເລັດຂະບວນການແລ້ວ ຝ່າຍໄທຈະສົ່ງພະນັກງານວິຊາການເຂົ້າມາເຮັດວຽກກັບຝ່າຍລາວ. ຝ່າຍລາວສະເໜີໃຫ້ຝ່າຍໄທເລັ່ງລັດດຳເນີນການໂຄງການໃຫ້ໄດ້ຈັດຕັ້ງປະຕິບັດໂດຍໄວ.

(2) ການຍົກລະດັບຈຸດຜ່ານແດນ ແລະ ການຂະຫຍາຍເວລາການເປີດ-ປິດດ່ານ

ສອງຝ່າຍເອກະພາບຕາມການຕົກລົງການຈັດຕັ້ງປະຕິບັດຕາມບົດບັນທຶກກອງປະຊຸມຄະນະກຳມາທິການຮ່ວມວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງທີ 18 ກ່ຽວກັບການຍົກລະດັບຈຸດຜ່ານແດນ ແລະ ການຂະຫຍາຍເວລາການເປີດ-ປິດດ່ານ ຢູ່ຕາມບັນດາແຂວງ ແລະ ຈັງຫວັດຕ່າງໆທີ່ມີຊາຍແດນຕິດຈອດກັນ ລວມທັງການຂະຫຍາຍເວລາການເປີດດ່ານທ້ອງຖິ່ນ ບ້ານເລົ່າໝາກຫູດ, ເມືອງໄຊພູທອງ, ແຂວງສະຫວັນນະເຂດ ແລະ ດ່ານບ້ານຍັກຄຸກ ຈັງຫວັດອຳນາດຈະເລີນ ຈາກອາທິດລະ 2 ວັນ ເປັນ 5 ວັນ.

(3) ຈັບຄູ່ຮ່ວມມື

ສອງຝ່າຍຮັບຊາບວ່າທີ່ຜ່ານມາ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສຳນັກງານພານິດຈັງຫວັດທີ່ມີຊາຍແດນຕິດຕໍ່ກັນ ແລະ ໄດ້ຈັບຄູ່ຮ່ວມມືກັນ ປະກອບດ້ວຍ ແຂວງສະຫວັນນະເຂດ-ຈັງຫວັດມຸກດາຫານແລ ອຳນາດຈະເລີນ, ແຂວງຈຳປາສັກ ແລະ ສາລະວັນ-ຈັງຫວັດອຸບົນຣາຊະທານີ, ແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ-ຈັງຫວັດບຶງການ ແລະ ນະຄອນພະນົມ, ນະຄອນຫຼວງວຽງຈັນ-ຈັງຫວັດໜອງຄາຍ ໄດ້ມີການຈັດກິດຈະກາຮ່ວມເພື່ອສົ່ງເສີມການຄ້າ ແລະ ການລົງທຶນລະຫວ່າງກັນ ແລະ ເຫັນດີທີ່ຈະສະໜັບສະໜູນໃຫ້ມີການຈັດກິດຈະກາໃນລັກສະນະດັ່ງກ່າວຕໍ່ໄປເພີ່ມເຕີມ ແລະ ໃນອານາຄົດ ທັງສອງຝ່າຍອາດຈະພິຈາລະນາຈັບຄູ່ຮ່ວມມືກັນລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ພານິດຈັງຫວັດອື່ນໆ ເພື່ອດຳເນີນກິດຈະກຳໃນລັກສະນະດັ່ງກ່າວ.

8. ການຮ່ວມມືທາງດ້ານວິຊາການ

- ຝ່າຍລາວສະແດງຄວາມຂອບໃຈຕໍ່ຝ່າຍໄທທີ່ໄດ້ໃຫ້ການຊ່ວຍເຫຼືອຈັດຝຶກອົບຮົມ ແລະ ສຳມະນາກ່ຽວກັບ AEC ຢູ່ທີ່ນະຄອນຫຼວງວຽງຈັນ, ຊຽງຂວາງ, ສາລະວັນ ແລະ ຫົວພັນ ໃຫ້ແກ່ນັກວິຊາການພາກລັດ ແລະ

ພາກທຸລະກິດຂອງ ສປປ ລາວ ໃນປີ 2012 ແລະ 2013 ແລະ ສືບຕໍ່ໃນການຈັດຝຶກອົບຮົມລັກສະນະດຽວກັນນີ້ຢູ່ທີ່ ແຂວງຫຼວງພະບາງ ແລະ ແຂວງອຸດົມໄຊ ໃນໄລຍະເດືອນເມສາ 2014 ນີ້, ຝ່າຍໄທສະເໜີໃຫ້ຝ່າຍລາວຈັດລຳດັບຄວາມສຳຄັນຫົວຂໍ້ທີ່ຕ້ອງການເພື່ອຈະພິຈາລະນາດຳເນີນການ ການຈັດສຳມະນາ ແລະ ຝຶກອົບຮົມໃນຫົວຂໍ້ອື່ນໆ .

9. ການຮ່ວມມືດ້ານການທ່ອງທ່ຽວ ແລະ ຂົນສົ່ງ

ຝ່າຍລາວແຈ້ງໃຫ້ຊາບກ່ຽວກັບການສ້າງຂົວຂ້າມແມ່ນ້ຳຂອງຢູ່ເມືອງປາກແບ່ງ, ແຂວງອຸດົມໄຊ ເພື່ອຫຼຸດໄລຍະທາງຂົນສົ່ງສິນ ຄ້າໄປຫາວຽດນາມ ແລະ ຈີນ ແມ່ນກຳລັງດຳເນີນການກໍ່ສ້າງຢູ່.

**ຫົວຂໍ້ປຶກສາຫາລືໃນກອງປະຊຸມແຜນການຮ່ວມມືລະຫວ່າງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສຳນັກ ງານພານິດຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 6 ທີ່ແຂວງຈຳປາສັກ, ສປປ ລາວ.**

10. ການສົ່ງເສີມ ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນ

(1) ການຮ່ວມມືທາງດ້ານວິຊາການ: ຝ່າຍລາວສະເໜີຂໍໃຫ້ຝ່າຍໄທພິຈາລະນາໃຫ້ທຶນຊ່ວຍເຫຼືອໄປທັດສະນະສຶກສາຖອດຖອນບົດຮຽນດ້ານການສົ່ງເສີມພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ, ການສົ່ງເສີມການຜະລິດ ແລະ ການປຸງແຕ່ງສິນຄ້າກະສິກຳ, ການພັດທະນາຜະລິດຕະພັນ OTOP ແລະ ODOP ໃຫ້ແກ່ພາກລັດ ແລະ ພາກເອກະຊົນຂອງ ສປປ ລາວ ຊຶ່ງຝ່າຍໄທຍິນດີພິຈາລະນາໃຫ້ການຊ່ວຍເຫຼືອ ແລະ ຂໍໃຫ້ຝ່າຍລາວລະບຸສາຂາປະເພດຂອງສິນຄ້າທີ່ຊັດເຈນ ເພື່ອຈະໄດ້ປະສານໜ່ວຍງານທີ່ຮັບຜິດຊອບພິຈາລະນາຕໍ່ໄປ.

(2) ການແລກປ່ຽນຢ້ຽມຢາມ ແລະ ການທັດສະນະສຶກສາລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ສຳນັກງານພານິດຈັງຫວັດທີ່ຕິດກັນ: ຝ່າຍລາວສະເໜີໃຫ້ມີການແລກປ່ຽນຂໍ້ມູນຂ່າວສານ, ມີການ ຢ້ຽມຢາມລະຫວ່າງ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ພານິດຈັງຫວັດທີ່ຊາຍແດນຕິດກັນ, ພ້ອມທັງ ການພົບປະນັກທຸລະກິດຂອງທັງສອງປະເທດ ລວມທັງການຈັດງານວາງສະແດງສິນຄ້າ ແລະ ງານຕະຫຼາດນັດ ໂດຍໃຫ້ ມີການຈັດຕັ້ງປະຕິບັດຢ່າງສະໜໍ່າສະເໜີຢ່າງໜ້ອຍປີລະຄັ້ງ. ຝ່າຍໄທແຈ້ງວ່າໃນປີ 2014 ກະຊວງພານິດໄທມີແຜນຈັດກິດຈະກຳພິເສດພາຍໃຕ້ "ມະຫາກຳການຄ້າລຸ່ມແມ່ນ້ຳຂອງ" ຊຶ່ງໄດ້ຈັດແລ້ວຄັ້ງທຳອິດ ລະຫວ່າງວັນທີ 26 ກຸມພາ- 2 ມີນາ 2014 ທີ່ຈັງຫວັດອຸບົນຣາຊະທານີ ໂດຍມີຜູ້ເຂົ້າຮ່ວມຈາກໜ່ວຍງານພາກລັດ ແລະ ເອກະຊົນຂອງ ສປປ ລາວ ແລະ ມີແຜນຈະຈັດອີກຄັ້ງທີ 2 ລະຫວ່າງວັນທີ 4-8 ເມສາ 2014 ທີ່ຈັງຫວັດໜອງຄາຍ ແລະ ລະຫວ່າງວັນທີ 4-8 ມິຖຸນາ 2014 ທີ່ຈັງຫວັດຊຽງລາຍ ແລະ ຂໍເຊີນໜ່ວຍງານພາກລັດ ແລະ ພາກເອກະຊົນຂອງ ສປປ ລາວ ເຂົ້າຮ່ວມ.

(3)ການອຳນວຍຄວາມສະດວກຕາມດ່ານຊາຍແດນ: ຝ່າຍໄທສະເໜີໃຫ້ຝ່າຍລາວອຳນວຍຄວາມສະດວກແກ່ນັກທຸລະກິດໄທທີ່ດຳເນີນທຸລະກິດຜ່ານຂົວມິດຕະພາບລາວ-ໄທແຫ່ງທີ 1 ໂດຍການເພີ່ມເຈົ້າໜ້າທີ່ກວດກາສິນຄ້າເພີ່ມເຕີມ ແລະ ຕູ້ບໍລິການ ສຳລັບສິນຄ້າກະສິກຳ ຊຶ່ງຝ່າຍລາວແຈ້ງໃຫ້ຊາບວ່າປະຈຸບັນຄະນະຮັບຜິດຊອບກຳລັງພິຈາລະນາກ່ຽວກັບບັນຫາດັ່ງກ່າວ.

(4) ດ່ານຊາຍແດນ

- ຝ່າຍໄທສະເໜີຂະຫຍາຍເວລາເປີດ-ປິດດ່ານຂົວມິດຕະພາບລາວ-ໄທ ແຫ່ງທີ1 ແລະ 3 ຈາກເວລາ 06:00-22:00ໂມງ ເປັນ 06-00-24:00ໂມງ ຝ່າຍລາວຈະນຳເອົາບັນຫາດັ່ງກ່າວໄປສະເໜີຕໍ່ຂະແໜງທີ່ກ່ຽວຂ້ອງແລ້ວຈະແຈ້ງໃຫ້ຊາບພາຍຫຼັງ.

- ສອງຝ່າຍສະແດງຄວາມຍິນດີຕໍ່ການຂະຫຍາຍວັນເວລາເປີດ-ປິດດ່ານທ້ອງຖິ່ນບ້ານໜອງດາ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ແລະ ຈຸດຜ່ອນປັນບ້ານໝໍ້, ອຳເພີສີຊຽງ, ຈັງຫວັດໜອງຄາຍ ຈາກ 2 ວັນເປັນ 3 ວັນຕໍ່ອາທິດ ແລະ ຝ່າຍໄທສະເໜີໃຫ້ຝ່າຍລາວສຶກສາຄວາມເປັນໄປໄດ້ໃນການຍົກລະດັບເປັນດ່ານຖາວອນ ຊຶ່ງຝ່າຍລາວຈະນຳເອົາໄປສະເໜີຕໍ່ກັບຂະແໜງທີ່ກ່ຽວຂ້ອງ.

(5) ການຈັດຕັ້ງປະຕິບັດການແຈ້ງພາສີຢູ່ຈຸດດຽວ (Single Stop Inspection- SSI)

ສອງຝ່າຍເຫັນດີໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງຕົນ ດຳເນີນການຈັດຕັ້ງປະຕິບັດການກວດກາຮ່ວມກັນຈຸດດຽວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ການລົງທຶນ ທັງສອງຝ່າຍ ຊຶ່ງປະຈຸບັນນີ້ຍັງລໍຖ້າການດຳເນີນການຂອງທັງສອງຝ່າຍ.

(6) ການສົ່ງເສີມການລົງທຶນ

- ສອງຝ່າຍສະໜັບສະໜູນຊຸກຍູ້ໃຫ້ນັກທຸລະກິດຂອງໄທເຂົ້າມາລົງທຶນຢູ່ ສປປ ລາວໃຫ້ຫຼາຍຂຶ້ນ ໂດຍສະເພາະແມ່ນຢູ່ເຂດອຸດສາຫະກຳ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະຕ່າງໆຂອງ ສປປ ລາວ, ຝ່າຍສະໄທເໜີຂໍໃຫ້ຝ່າຍລາວໃຫ້ຂໍ້ມູນດ້ານການລົງທຶນໂດຍສະເພາະໃນເຂດຊາຍແດນເພື່ອເຜີຍແຜ່ໃຫ້ນັກທຸລະກິດໄທ.

- ຝ່າຍລາວສະເໜີໃຫ້ມີການຊຸກຍູ້ໃຫ້ນັກທຸລະກິດໄທເຂົ້າມາລົງທຶນຮ່ວມກັບນັກທຸລະກິດໃນ ສປປ ລາວໃນ ການຜະລິດ ແລະ ປຸງແຕ່ງສິນຄ້າກະສິກຳ.

11. ການຮ່ວມມືທາງດ້ານການຂົນສົ່ງ ແລະ ໂລຈິດສະຕິກ

(1) ການບໍລິຫານຈັດການລະບົບໂລຈິດສະຕິກ

- ຝ່າຍໄທສະເໜີໃຫ້ຝ່າຍລາວອຳນວຍຄວາມສະດວກໃຫ້ແກ່ນັກທຸລະກິດຂອງໄທໃນການຂົນສົ່ງສິນຄ້າຜ່ານແດນຂອງໄທໄປຈີນຕອນໃຕ້ ຜ່ານເສັ້ນທາງ R3A ຊຶ່ງຍັງມີຄວາມຫຍຸ້ງຍາກໃນການຄ່ຽນຖ່າຍສິນຄ້າ. ກອງປະຊຸມເຫັນດີທີ່ຈະຮ່ວມມືກັນປັບປຸງລະບົບການຄ່ຽນຖ່າຍ ໂດຍຝ່າຍໄທຈະສະໜັບສະໜູນໃຫ້ນັກລົງທຶນໄທເຂົ້າຮ່ວມທຶນໃນການປັບປຸງຂະບວນການປ່ຽນຫົວລົດລາກ ແລະ ຄ່ຽນຖ່າຍສິນຄ້າໂດຍນຳໃຊ້ເຄື່ອງຈັກເພື່ອຫຼຸດເວລາ ແລະ ຕົ້ນທຶນດ້ານໂລຈິດສະຕິກ.

- ຝ່າຍລາວແຈ້ງໃຫ້ຝ່າຍໄທຊາບກຳລັງປັບປຸງການບໍລິການຄ່ຽນຖ່າຍສິນຄ້າຜ່ານແດນດ່ານສາກົນບໍ່ເຕັນບໍ່ຫານ ໂດຍສະເພາະຈຸດຄ່ຽນຖ່າຍກວດກາສິນຄ້າ ແລະ ພາຫະນະເພື່ອເຮັດໃຫ້ການບໍລິການສະດວກສະບາຍວ່ອງໄວ ແລະ ຫຼຸດຜ່ອນການແອອັດ.

- ສອງຝ່າຍເຫັນດີໃຫ້ພາກສ່ວນກ່ຽວຂ້ອງຊຸກຍູ້ໃຫ້ຂໍ້ຕົກລົງວ່າດ້ວຍການຂົນສົ່ງຜ່ານແດນໃນອະນຸພາກພື້ນແມ່ນຂອງ (CBTA) ພາຍໃຕ້ຂອບ GMS ໃຫ້ມີຜົນບັງຄັບໃຊ້ໂດຍໄວ ເພື່ອແກ້ບັນຫາການຂົນສົ່ງຜ່ານແດນລະຫວ່າງປະເທດ ສະມາຊິກ GMS.

(2) ການຂົນສົ່ງສິນຄ້າຜ່ານລະບົບລາງ

- ຝ່າຍລາວມີຄວາມຕ້ອງການຂົນສົ່ງສິນຄ້າທາງລົດໄຟຈາກ ສປປ ລາວ ໄປຫາ ລາດກະບັງ ຊຶ່ງປະຈຸບັນລັດຖະ ບານໄທໄດ້ໃຫ້ການສະໜັບໜູນໃນການສ້າງທາງລົດໄຟເຊື່ອມຈາກຈັງຫວັດໜອງຄາຍໄປຍັງທ່ານາແລ້ງຂອງລາວ.

- ຝ່າຍໄທແຈ້ງວ່າປະຈຸບັນການຂົນສົ່ງຕາມເສັ້ນທາງດັ່ງກ່າວ ແມ່ນເຮັດໄດ້ສະເພາະການຂົນສົ່ງຜູ້ໂດຍສານເນື່ອງ ຈາກວ່າຍັງບໍ່ມີສະຖານນີຄ່ຽນຖ່າຍສິນຄ້າ (Inland Container Depot – ICD).

- ທັ້ງນີ້, ສະມາຄົມຜູ້ປະກອບການຂົນສົ່ງຂອງ ສປປ ລາວ ແລະ ໄທ ໄດ້ລົງນາມໃນບົດບັນທຶກຄວາມເຂົ້າໃຈຮ່ວມໃນການສ້າງ ICD ແລ້ວ ແຕ່ຍັງບໍ່ທັນມີຄວາມຄືບໜ້າ. ນອກຈາກນີ້, ຫັງຈະໄດ້ມີການຂະຫຍາຍທາງລົດໄຟໄປຈົນເຖິງນະຄອນຫຼວງວຽງຈັນ.

- ສປປ ລາວ ແຈ້ງໃຫ້ຊາບວ່າ ກຳລັງສຶກສາຄວາມເປັນໄປໄດ້ໃນການສ້າງ ICD ທີ່ນະຄອນຫຼວງວຽງຈັນ ຝ່າຍລາວໄດ້ຮັບການຊ່ວຍເຫຼືອຈາກອົງການ JICA ປະເທດຍີ່ປຸ່ນ, ປະຈຸບັນກຳລັງດຳເນີນການອອກແບບເພື່ອສະເໜີລັດຖະບານ. ຝ່າຍໄທສະໜັບສະໜູນໃຫ້ຝ່າຍລາວເລັ່ງດຳເນີນການສຶກສາຄວາມເປັນໄປໄດ້ ຊຶ່ງຊ່ວຍອານວຍຄວາມສະດວກການຂົນສົ່ງຜ່ານລະບົບລາງຈາກ ສປປ ລາວ ໄປລາດກະບັງ.

12. ການຮ່ວມມືດ້ານສິນຄ້າກະສິກຳ

(1) ນະໂຍບາຍການນຳເຂົ້າສາລີລ້ຽງສັດຂອງໄທ:

ຝ່າຍລາວສະເໜີໃຫ້ຝ່າຍໄທເອົາໃຈໃສ່ພິຈາລະນາຕື່ມໃນການຍົກເລີກມາດຕະການຈຳກັດໂກຕາ ແລະ ເວລານາເຂົ້າສາລີຈາກ ສປປ ລາວ ຊຶ່ງສ້າງຄວາມຫຍຸ້ງຍາກແກ່ການນຳເຂົ້າ ແລະ ສົ່ງອອກແກ່ນັກທຸລະກິດສອງປະເທດ ຢ່າງໃດກໍ່ຕາມ ທີ່ຜ່ານມາຝ່າຍໄທໄດ້ຂະຫຍາຍເວລາການນຳເຂົ້າ ແລະ ໃຫ້ອົງການຄັງສິນຄ້າສາມາດນຳເຂົ້າໄດ້ໂດຍບໍ່ຈຳກັດເວລາ ລວມທັງໄດ້ສະເໜີໃຫ້ພິຈາລະນາໃນລະດັບນະໂຍບາຍ ຢ່າງໃດກໍ່ຕາມຝ່າຍໄທມີປະກາດພະລາດຊະບັນຍັດປະກາດຍຸບສະພາ ເຮັດໃຫ້ການດຳເນີນການງຸດສະງັກໄປ ເມື່ອມີຄວາມຄືບໜ້າຈະແຈ້ງໃຫ້ຝ່າຍລາວຊາບຕໍ່ໄປ.

(2) ສິນຄ້າກະສິກຳອື່ນໆ:

- ຝ່າຍລາວແຈ້ງບັນຫາເລື່ອງການສົ່ງອອກສິນຄ້າກະສິກຳຈາກລາວມາໄທ ຊຶ່ງຍັງປະສົບບັນຫາໃນການກວດກາດ້ານມາດຕະຖານສຸຂະອານາໄມພືດ ແລະ ການປະເມີນຄວາມສ່ຽງ ໂດຍສະເພາະໝາກອຶ, ໝາກເລັ່ນ, ມັນຕົ້ນຕາກແຫ້ງ, ໝາກນາວ ແລະ ອື່ນໆ ຊຶ່ງຝ່າຍໄທຍິນດີຊ່ວຍປະສານໄປຍັງໜ່ວຍງານຮັບຜິດຊອບເພື່ອພິຈາລະນາບັນຫາດັ່ງກ່າວ ໂດຍຂໍໃຫ້ຝ່າຍລາວແຈ້ງລາຍລະອຽດຂອງສິນຄ້າກະສິກຳທີ່ຝ່າຍລາວຕ້ອງການສົ່ງອອກໄປ ຣາຊະອານາຈັກໄທ.

- ຝ່າຍລາວສະເໜີໃຫ້ຝ່າຍໄທໃຫ້ຄວາມຮ່ວມມືສິນຄ້າກະສິກຳ ເຊັ່ນດຽວກັບທີ່ຝ່າຍລາວເຮັດກັບ ສປ ຈີນ ໂດຍການສົ່ງເສີມໃຫ້ນັກທຸລະກິດຈີນເຂົ້າມາລົງທຶນເພາະປູກສິນຄ້າກະສິກຳ ໂດຍໃຫ້ການສະໜັບສະໜູນເມັດພັນພືດ ແລະ ຮັບຊື້ຜົນຜະລິດກັບໄປຈີນ ໃນສິນຄ້າຕ່າງໆ ເຊັ່ນ: ກ້ວຍ, ໝາກມ່ວງ, ໝາກນາວ ແລະ ຄວາມຮ່ວມມືທີ່ຝ່າຍລາວໄດ້ເຮັດກັບຫວຽດນາມ ຊຶ່ງຝ່າຍໄທຂໍລາຍລະອຽດຄວາມຮ່ວມມືດັ່ງກ່າວຈາກຝ່າຍລາວເພື່ອພິຈາລະນາຕໍ່ໄປ.

13. ເລື່ອງອື່ນໆ

- ຝ່າຍໄທຂໍຄວາມກະຈ່າງກ່ຽວກັບການເກັບຄ່າທຳນຽມເສັ້ນທາງ R8, R12 ໃນອັດຕາ 2-6% ຂອງສິນຄ້າເຖິງແມ່ນວ່າສິນຄ້າຂົນສົ່ງຜ່ານແດນໄປຫວຽດນາມ ແລະ ຈີນ ລວມທັງການເກັບຄ່າປະກັນໄພລົດ ແລະ ຄ່າທຳນຽມເສັ້ນທາງ R9 ຊຶ່ງຝ່າຍລາວຊີ້ແຈງວ່າ ເນື່ອງຈາກເປັນສິນຄ້ານຳເຂົ້າ ເພື່ອສົ່ງອອກ ບໍ່ແມ່ນສິນຄ້າຂົນສົ່ງຜ່ານແດນ ສຳລັບການເກັບຄ່າປະກັນໄພລົດ ແລະ ຄ່າທຳນຽມຕາມເສັ້ນທາງ R9 ແມ່ນເປັນການເກັບຂອງບໍລິສັດປະກັນໄພ ຊຶ່ງເປັນໄປຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງລາວ.

- ທັງສອງຝ່າຍຮັບຊາບວ່າ ກອງປະຊຸມຄະນະລັດຖະມົນຕີຮ່ວມຢ່າງບໍ່ເປັນທາງການລາວ-ໄທ ໄດ້ເຫັນດີໃຫ້ມີການຈັດຕັ້ງຄະນະເຮັດວຽກຮ່ວມເພື່ອແກ້ໄຂບັນຫາການເກັບຄ່າທຳນຽມເສັ້ນທາງ R8 ແລະ R12 ແລ້ວ ຈຶ່ງເຫັນຄວນສະໜັບສະໜູນໃຫ້ໜ່ວຍງານທີ່ຮັບຊອບຂອງທັງສອງຝ່າຍເລັ່ງດຳເນີນການແກ້ໄຂບັນຫາດັ່ງກ່າວ.

- ຝ່າຍໄທຂໍຄວາມກະຈ່າງແຈ້ງກ່ຽວກັບລະບົບການເກັບພາສີຊື້ຂາຍ (Sales-Purchase Tax) ທີ່ມີການເລືອກປະຕິບັດໂດຍສະເພາະທີ່ເກັບຈາກພາຫະນະນຳເຂົ້າຈາກໄທສູງກວ່າພາຫະນະທີ່ນຳເຂົ້າຈາກ ສປ ຈີນ ແລະ ສ. ເກົາຫຼີ ຝ່າຍລາວໄດ້ແຈ້ງໃຫ້ຝ່າຍໄທຮັບຊາບວ່າ ລະບຽບການດັ່ງກ່າວກຳລັງຢູ່ໃນຂັ້ນຕອນປຶກສາຫາລືພາຍໃນກັບພາກສ່ວນທີ່ກ່ຽວຂ້ອງ. ທັງນີ້ກໍ່ເພື່ອເຮັດໃຫ້ລະບຽບການດັ່ງກ່າວນັ້ນສອດຄ່ອງກັບລະບຽບການ ແລະ ພັນທະສັນຍາສາກົນທີ່ ສປປ ລາວເປັນພາຄີ.

**14. ກຳນົດວັນ ແລະ ສະຖານທີຈັດກອງປະຊຸມຄັ້ງຕໍ່ໄປ.**

ກອງປະຊຸມເຫັນດີນຳກັນໃຫ້ຈັດກອງປະຊຸມ "ແຜນການຮ່ວມມືລະຫວ່າງພະແນກອຸດສາຫະກຳ ແລະ ການ ຄ້າແຂວງ ແລະ ສຳນັກງານພານິດຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 7" ຂຶ້ນໃນປີ 2015 ຢູ່ຣາຊະອານາຈັກໄທ ໂດຍຈະແຈ້ງເວລາ ແລະ ສະຖານທີ່ໃຫ້ກັນຊາບຕາມພາຍຫຼັງ.

15. ກອງປະຊຸມໄດ້ມີການປຶກສາຫາລືແລກປ່ຽນຄວາມຄິດເຫັນແບບກົງໄປກົງມາດ້ວຍຄວາມຈິງໃຈ ແລະ ເປັນເອກະພາບຂອງທັງສອງຝ່າຍ ບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ, ສອງຝ່າຍສະແດງຄວາມຍິນດີ ແລະ ພໍໃຈຕໍ່ກັບຜົນສຳເລັດຂອງຜົນກອງປະຊຸມ ແລະ ຢືນຢັນຄວາມປາດຖະໜາທີ່ຈະສືບຕໍ່ສານສາຍສຳພັນອັນດີ ລະຫວ່າງເຈົ້າໜ້າທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ສຳນັກງານງານພານິດຈັງຫວັດຊາຍແດນລາວ-ໄທ ຕໍ່ເຈົ້າໜ້າທີ່ຕາມຊາຍແດນ ໃຫ້ແໜ້ນແຟ້ນຂຶ້ນ ເພື່ອນຳຄວາມຜາສຸກໃຫ້ແກ່ປະຊາຊົນທັງສອງຊາດຢ່າງຍືນຍົງຕໍ່ໄປ.

16. ບົດບັນທຶກກອງປະຊຸມສະບັບນີ້ເຮັດຂຶ້ນທີ່ ແຂວງຈຳປາສັກ, ສປປ ລາວ ໃນວັນທີ 26 ມິນາ 2014 ເປັນສອງສະບັບ ເປັນພາສາລາວ ແລະ ພາສາໄທ. ທັງສອງສະບັບມີຄຸນຄ່າເທົ່າທຽມກັນ.